# ພັນທະມິດເພື່ອປະຊາທິປະໄຕໃນລາວ
**ALLIANCE FOR DEMOCRACY IN LAOS**
**Alliance pour la Démocratie au Laos**

*Letmather Str.71, 58119 Hagen, Germany. Phone: 0049( 2334) 44 44 668, E-Mail: alliance-lao@alice.de*
*www.laoalliance.org*


## ຖະແລງການ ຂອງ ພັນທະມິດເພື່ອປະຊາທິປະໄຕໃນລາວ ຕໍ່ກອງປະຊຸມ ສະພາສິດທິມະນຸສ ສະຫະປະຊາຊາດ ທີ່ເຈນີວາ ກ່ຽວກັບ ສປປລາວ ຄັ້ງວັນທີ 28 ກັນຍາ 2020

ໃນກອງປະຊຸມທົບທວນ ເປັນໄລຍະ ຂອງສະພາສິດທິມະນຸສ ສະຫະປະຊາຊາດ ຄັ້ງທີ່ສາມ ທີ່ເຈນີວາ ກ່ຽວກັບ ສປປລາວ ຄັ້ງວັນທີ 28 ກັນຍາ 2020 ໂດຍມີ ທາງການ ສປປລາວ, ຣັຖະບານຫລາຍປະເທດ ແລະ ອົງການຈັດຕັ້ງສາກົນ ຫລາຍອົງການ ເຂົ້າຮ່ວມ.

ໃນຖະແລງການ ຂອງ ທາງການ ສປປລາວ ໄດ້ກ່າວໃນກອງປະຊຸມ ວ່າ ຜ່ານມາ ສປປ ລາວ ໄດ້ນໍາເອົາ ຂໍ້ສເນີ ຂອງສະພາສິດທິມະນຸດ ໄປປະຕິບັດຕົວຈິງ ທູກຢ່າງຕາມ ອຸດົມການ ແລະ ກົດຫມາຍ ສປປ ລາວ. ຕໍ່ຄໍາສເນີ ຂອງ ສະພາສິດທິມະນຸດ ຈໍານວນ 226 ຂໍ້ນັ້ນ ທາງ ການ ສປປລ ປະຕິບັດຮັບເອົາພຽງ 160 ຂໍ້ ສ່ວນ 66 ຂໍ້ທີ່ຍັງເຫລືອນັ້ນ ບໍ່ຮັບເອົາ ໂດຍອ້າງວ່າ ບໍ່ເຫມາະສົມ ກັບກົດຫມາຍ ສປປລາວ ດ້ານນຶ່ງ ທາງການ ສປປລາວ ພັດກ່າວວ່າ ຈະປະຕິບັດ ແລະຮ່ວມມື ກັບສາກົນ ທຸກຢ່າງ.

ຕໍ່ ຄໍາເຫັນຂອງຣັຖບານຫລາຍປະເທດ ແລະ ອົງການຈັດຕັ້ງສາກົນ ທີ່ ເນັ້ນຫນັກວ່າ ທາງການ ສປປລາວ ບໍ່ໄດ້ປະຕິບັດຕົວຈິງ ຕໍ່ ບັນຫາ ສິດທິ ໃນການສະແດງຄວາມຄິດເຫັນ, ສິດທິທາງຂ່າວສານ, ສິດທິພົນລະເມືອງ ແລະ ສິດທິທາງການເມືອງ ໂດຍໄດ້ຍົກ ຫລາຍເຫດການທີ່ເກີດຂຶ້ນໃນລາວ ທາງການ ສປປລາວ ພັດ ປະຕິເສດ ວ່າເປັນຂໍ້ມູນທີ່ບໍ່ມີມູນຄວາມຈິງ.

ພວກເຮົາ ອົງການ ພັນທະມິດເພື່ອປະຊທໍາທິປະໄຕໃນລາວ ເຫັນວ່າ ທາງການ ສປປລາວ ບໍ່ໄດ້ ມີຄວາມຈິງໃຈ ທີ່ຈະແກ້ໄຂ ບັນຫາ ລະເມີດ ສິດ ທິມະນຸດ ໃນລາວ, ທຸກຄັ້ງ ທີ່ທາງການ ສປປລາວ ມາຮ່ວມປະຊຸມ ໃນສະພາສິດທິມະນຸດ ແລະກອງປະຊຸມ ກັມມະການສິດທິມະນຸດ ສະຫະປະຊາຊາດ ກໍມີແຕ່ມາລາຍງານແບບ ພິກປີ້ນກັບຄວາມເປັນຈິງ ຊໍ້າບໍ່ຫນໍາ ຍັງ ໄປຕູ່ຫາ ໃສ່ ອົງການ ສາກົນ ວ່າໄປເອົາຂໍ້ມູນ ທີ່ບໍ່ມີຄວາມຈິງມາກ່າວ ທັ້ງໆທີ່ວ່າ ມີຫລັກຖານ ຫລາຍຢ່າງ ຊຶ່ງທາງການ ສປປລາວ ເອງກໍ່ໄດ້ປະກາດ ເປັນທາງການ ໃຫ້ ປະຊາຊົນລາວ ໄດ້ຮູ້ເຫັນ ເຊັ່ນ ການ ຈັບກຸມ ນາງຫ້ອຍເຮືອງ ໄຊຍະ ບູລີ ຫລືນາງ ຫມອຍ, ເຫັດການຈັບກຸມ ທ່ານ ສັງຂານ ພະຈັນທະວົງ ຫລື ທິດສີ ແລະ ເຫດການຈັບກຸມ ຜູ້ທີ່ຖືກກ່າວຫາ ທາງການເມືອງອື່ນໆ.

ກ່ຽວກັບສິດທິທາງດ້ານຂ່າວສານ ທີ່ອົງການບໍ່ຂຶ້ນກັບຣັຖບານຂອງສາກົນ ໄດ້ກ່າວວ່າ ຍັງຖືກຈໍາກັດຢ່າງຮ້າຍແຮງ ແມ່ນ ກະທັ້ງແຕ່ ນັກຂ່າວສາກົນກໍຍັງບໍ່ມີສິດເຂົ້າໄປເກັບກໍາຂ່າວໃນລາວໄດ້ຢ່າງມີອິດສີຣະພາບ ອັນເປັນຫລັກຖານ ຄວາມຈິງ ອັນຈະແຈ້ງ ແຕ່ ທາງການ ສປປລາວ ຍັງປະຕິເສດຄວາມຈິງ.

ຕໍ່ການບັງຄັບໃຫ້ຫາຍສາບສູນ ຂອງ ທ່ານ ສົມບັດສົມພອນ ທາງການ ສປປລາວ ຍັງປະຕິເສດບໍ່ຮັບເອົາຄໍາສເນີຂອງຣັຖບານອັງກິດ ທີ່ສເນີໃຫ້ຮັບເອົາ ກັມມະການພິເສດ ຂອງສາກົນເຂົ້າໄປສືບສວນກວດກາໃນລາວ ອັນເປັນການສະແດງໃຫ້ເຫັນຄວາມບໍ່ຈິງໃຈ ຂອງ ທາງການ ສປປລາວ.

ຕໍ່ກັບສິດທິໃນການນັບຖື ສາສນາ ເຖິງແມ່ນວ່າ ທາງການ ສປປລາວ ໄດ້ມາກ່າວວ່າໄດ້ອອກກົດຫມາຍໃຫມ່ ມາຕຣາທີ່315 ແລ້ວ ກໍຕາມ ແຕ່ໃນຕົວຈິງ ຍັງມີການຈັບກຸມຜູ້ນັບຖື ສາສນາຄຣິສຕຽນໃນລາວ ເຊັ່ນ: ອາຈານ ສີທົນ ທິບພະວົງ ອາຍຸ 34 ປີ ອາຈານສອນ ສາສນາຄຣິສຕຽນ ຢູ່ບ້ານກະລືມວັງແຊ້ ເມືອງຊົນບູຣີ ແຂວງສວັນນະເຂດ ໄດ້ຖືກ ເຈົ້າຫນ້າທີ່ຕໍາຣວດເມືອງຈັບໂຕໄປເມື່ອວັນທີ 15 ມີນາ 2020 ທີ່ຜ່ານມາ ເທົ່າເຖິງປັດຈຸບັນ ກໍຍັງບໍ່ຮູ້ວ່າ ຈະມີການຕັດສິນຄະດີຍາມໃດ ຊຶ່ງເປັນສະແດງໃຫ້ເຫັນວ່າ ມີກົດຫມາຍ ບໍ່ປະຕິບັດ ກໍເປັນກົດຫມາຍ ທີ່ບໍ່ສັກສິດ.

ການທີ່ ທາງການ ສປປລາວ ອ້າງວ່າ ຈະຮ່ວມມືກັບ ສາກົນ ທຸກດ້ານ ແຕ່ ພັດ ພິກປີ້ນຄວາມຈິງແລະ ຕົ້ມຕົວະ ສາກົນ ເປັນ ທັດສະນະ ອັນບໍ່ຖືກຕ້ອງ ແລະ ບໍ່ມີຄວາມຈິງໃຈ ຂອງ ທາງການ ສປປລາວຕໍ່ສາກົນ ກໍ່ຄື ຕໍ່ ສະພາສິດທິມະນຸດ ສະຫະປະຊາຊາດ. ດັ່ງນັ້ນ ພວກເຮົາ ຈຶ່ງ ສເນີ ໃຫ້ ທາງ ສະພາສິດທິມະນຸດ ສະຫະປະຊາຊາດ ຈັດຕັ້ງກັມມະການພິເສດ ເຂົ້າໄປ ກວດການ ຕິດຕາມ ສະພາບຄວາມເປັນຈິງ

ກ່ຽວກັບບັນຫາ ການ ລະເມີດ ສິດທິມະນຸດ ອັນຮ້າຍແຮງ ໃນ ສປປລາວ ແລະ ຈົ່ງພູກດັນໃຫ້ ທາງການ ສປປລາວ ຍອມປະຕິບັດ ທຸກຂໍ້ສເນີ ຂອງ ສະພາສິດທິມະນຸດ ໃຫ້ ປະກົດຜົນເປັນຈິງ ຢ່າງຈິງຈັງ.

ທີ່ເຢັຍຣະມັນ ວັນທີ່ 29 ກັນຍາ 2020




ປະທານ ພັນທະມິດເພື່ອປະຊາທິປະໄຕໃນລາວ
ດຣ. ບຸນທອນ ຈັນທະລາວົງ-ວີເຊີ

ບ່ອນນໍາສົ່ງ:

- ສະພາສິດທິມະນຸດ ສະຫະປະຊາຊາດ
- ຂ້າຫລວງໃຫຍ່ສະຫະປະຊາຊາດ ດ້ານ ສິດທິມະນຸດ
- ຄະນະກັມມະການສິດທິມະນຸດ ສະຫະປະຊາຊາດ
- ຣັຖບານປະເທດຕ່າງໆ ໃນສະຫະປະຊາຊາດ
- ບັນດາອົງການຈັດຕັ້ງສາກົນ ເພື່ອສິດທິມະນຸດ

**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Phone: +49-2334-44 44 668, Email: chanthalavong@aol.com
**France:** **Mr.Somphet Vatthanou** Vice-President , 2 AV Combattant en a.f.n.69140, Rillieux La Pape,
Phone: +33-6-15192201, s.vatthanou@gmail.com
**USA:** **Ms.Khamphene Souvannasane,** regional president, ADL chapter of USA , 3837 Rusty Dell St.,
Fortworth, TX 76111, Phone:+1-682- 554- 6675 , Email: khamhene@yahoo.com
**Canada:** **Mr.Kambane Anonthisen,** regional president, ADL chapter of Canada, 84 Highgatz Rord Kichener , ONT,
Phone:+1-519-58 80 502, email: khambane@hotmail.com
**Australia:** **Mr.Pheng Sacksady**, regional president, ADL chapter of Australia, 6 Quambone Place,Isabella Plains
A.C.T, Phone+61-41 37 66 216, Email: pheng-sone52@gmail.com.au
**New Zealand:** **Mr. Somchine Sithivong,** regional president, ADL chapter of New Zeeland**,** 6 Ropata Cres, Lower Hutt.
5010 Wellington,phone: +64- 49 34 86 35, E-Mail: xsittivong24@gmail.com